## ການຮ້ອງຂໍເອົາ ການຟັງເຣື່ອງເປັນທາງການ

ເພື່ອຈະຮ້ອງຂໍເອົາການຟັງເຣື່ອງທີ່ເປັນທາງການ, ສົ່ງຣາຍຣະ ອຽດຕໍ່ລົງໄປນີ້ມາພາຍໃນ 45 ວັນຂອງການຕັດສິນທີ່ທ່ານກຳ ລັງອຸທອນຢູ່ໄປທີ່:

Office of Administrative Hearings
PO Box 42489
Olympia, WA 98504-2489

ກະຣຸນາລວມເອົາ:

- ຊື່, ທີ່ຢູ່ ແລະ ເລກໂທຣະສັບຂອງທ່ານ
- ຫນັງສືແຈ້ງການອະທິບາຍສິ່ງທີ່ທ່ານບໍ່ເຫັນພ້ອມນຳ ແລະ ເປັນຫຍັງ
- ຣາຍຣະອຽດອື່ນໆທຸກໆຢ່າງທີ່ອູ້ມຊູທ່າທີຂອງທ່ານ (ເຊັ່ນວ່າໂກປີຂອງຫນັງສື/ ໃບແຈ້ງການກະທຳຂອງ DVR)

ການຟັງເຣື່ອງທີ່ເປັນທາງການຈະຖືກຈັດຂື້ນພາຍໃນ 60 ວັນຂອງວັນທີທີ່ຄຳຮ້ອງຂໍຂອງທ່ານໄດ້ຮັບ.

ຫມາຍເຫດ: ການບໍຣິການຂອງທ່ານນຳຜະແນກ DVR ຈະດຳເນີນຕໍ່ໄປໃນຂະນະທີ່ເຣື່ອງບັນຫາກຳລັງຖືກກວດເບິ່ງຄືນຢູ່, ນອກຈາກວ່າມັນມີຫລັກຖານວ່າທ່ານໄດ້ຮັບການບໍຣິການຂອງ DVR ໂດຍການເອົາຣາຍຣະອຽດເທັດໃຫ້, ໄດ້ທຳການສໍ້ໂກງ, ຫລື ການກະທຳຜິດຕໍ່ກົດຫມາຍອື່ນໆທີ່ກ່ຽວພັນນຳການບໍຣິການຂອງ VR.

ຖ້າຫາກວ່າທ່ານຕັດສິນໃຈທີ່ຈະຂໍເອົາການຟັງເຣື່ອງທີ່ເປັນທາງການ, ທ່ານຍັງຈະພະຍາຍາມທີ່ຈະແກ້ໄຂບັນຫາຢ່າງບໍ່ເປັນທາງການໄດ້ຢູ່. ຖ້າຫາກວ່າທ່ານບັນລຸການຕົກລົງນຳຜະແນກ DVR ໄດ້ກ່ອນການຟັງເຣື່ອງ, ທ່ານຕ້ອງແຈ້ງບອກຫ້ອງການຟັງເຣື່ອງຂອງອຳນາດການປົກຄອງເພື່ອຈະເລີກລົ້ມການຟັງເຣື່ອງ.

ພະນັກງານຂອງຜະແນກ DVR ທຸກໆຄົນສາມາດເອົາຣາຍ ຣະອຽດເພີ້ມເຕີມໃຫ້ທ່ານໄດ້ກ່ຽວກັບທາງເລືອກເຫລົ່ານີ້ລວມທັງຣາຍຣະອຽດຂອງການຕິດຕໍ່.



"ຂ້າພະເຈົ້າຂໍຂອບໃຈໃນໂອກາດທີ່ຈະເຂົ້າຮ່ວມໃນການໄກ່ເກັ່ຽທີ່ເປັນທາງການຍ້ອນວ່າມັນໄດ້ຊ່ວຍນຳການຕິດຕໍ່ສື່ສານ ແລະ ການເຂົ້າໃຈໃນທ່າທີ ແລະ ຄວາມຂ້ອງໃຈຂອງຄົນອື່ນ."

Division of Vocational Rehabilitation
Washington State Department of
Social and Health Services
PO Box 45340 ▪ Olympia, WA 98504-5340
1-800-637-5627 ຫລື (360) 725-3636
ຜະແນກຕໍ່ສາຍຂອງຣັດວໍຊິງຕັນ: 711

**www.dshs.wa.gov/ra/division-vocational-rehabilitation**

DSHS 22-824 LA (Rev. 9/16) Laotian

ບຸກຄົນຜູ້ທີ່ມີຄວາມເສັຽອົງຄະ



# ສິດທິຂອງທ່ານໃນຖານະເປັນລູກຄ້າຂອງຜະແນກ DVR

Washington State Department of Social & Health Services

*Transforming lives*

ຜະແນກຝຶກຝົນວິຊາຊີບໃຫ້ດີຄືນ

## ຖ້າຫາກວ່າທ່ານ ຫລື ຜູ້ປຶກສາ DVR ຂອງທ່ານມີບັນຫານຳການຕົກລົງກັນໄດ້ໃນການຕັດສິນ, ທາງເລືອກຕໍ່ລົງໄປນີ້ກໍມີໄວ້ໃຫ້ແກ່ທ່ານ:

### 1 ເວົ້າລົມນຳຜູ້ປຶກສາ VR ຂອງທ່ານ

ອະທິບາຍເຫດຜົນສຳລັບການຕັດສິນຂອງທ່ານ ແລະ ລກປ່ຽນຣາຍຣະອຽດທີ່ອູ້ມຊູການຕັດສິນຂອງທ່ານ. ຫລັງຈາກການເວົ້າລົມກ່ຽວກັບບັນຫາ, ຖ້າຫາກວ່າທ່ານແລະຜູ້ປຶກສາ DVR ຂອງທ່ານຍັງບໍ່ຕົກລົງເຫັນພ້ອມນຳກັນໄດ້ເທື່ອ, ທ່ານຈະຂໍເວົ້າລົມນຳຜູ້ຄວບຄຸມງານຂອງເຂົາເຈົ້າໄດ້ ແລະ ຂໍໃຫ້ຄຳຕັດສິນຖືກກວດເບິ່ງຄືນ.

### 2 ຂອກເອົາຄວາມຊ່ວຍເຫລືອຈາກໂຄງການຊ່ວຍເຫລືອລູກຄ້າ (CAP)

ໂຄງການຊ່ວຍເຫລືອລູກຄ້າ (CAP) ເປັນໂຄງການບໍ່ຂື້ນນຳໃຜຊຶ່ງຖືກກໍ່ຕັ້ງຂື້ນມາພາຍໃຕ້ກົດໝາຍເພື່ອຈະໃຫ້ຄຳແນະນຳ ແລະ ຣາຍຣະອຽດກ່ຽວກັບສິດທິຂອງທ່ານໃນຖານະເປັນລູກຄ້າຂອງ DVR ຄົນນຶ່ງໂດຍບໍ່ຄິດຄ່າແນວໃດຕໍ່ທ່ານ. ທ່ານຍິນດີທີ່ຈະຕິດຕໍ່ຫາໂຄງການ CAP ໄດ້ທຸກໆເວລາໃນຣະຫວ່າງການດຳເນີນການຝຶກຝົນວິຊາຊີບໃຫ້ດີຄືນ. ຜູ້ຕາງໜ້າຂອງ CAP ສາມາດຊ່ວຍເຫລືອທ່ານໃຫ້ເຂົ້າໃຈ ແລະ ຮັບເອົາການບໍຣິການທີ່ມີຢູ່ຈາກ DVR, ຫລື ສາມາດຊ່ວຍເຫລືອທ່ານວົ້ານຳ DVR ກ່ຽວກັບຄວາມຂ້ອງໃຈຂອງທ່ານ.

ເພື່ອຈະຕິດຕໍ່ຫາຜູ້ຕາງໜ້າຈາກໂຄງການ CAP, ໂທຫາເລກ 206-721-5999 ຫລື 1-800-544-2121 ສຽງເວົ້າ, 206-721-6072 TTY. ອີກຢ່າງນຶ່ງແວບໄຊທ໌ຂອງ CAP ຢູ່ທີ່ **www.washingtoncap.org** ຍັງມີຣາຍຣະອຽດສຳລັບການຕິດຕໍ່ຫາພະນັກງານອີກ ແລະ ການບັນຣະຍາຍຂອງໂຄງການ CAP.

### 3 ຍື່ນໜັງສືຄຳຮ້ອງຂໍເອົາການຍົກເວັ້ນຕໍ່ນະໂຍບາຍ.

ທ່ານສາມາດຮ້ອງຂໍເອົາການຍົກເວັ້ນຕໍ່ນະໂຍບາຍຈາກຜູ້ຄວບຄຸມງານຂອງຜູ້ປຶກສາ DVR ຂອງທ່ານ. ຄຳຮ້ອງຂໍຂອງທ່ານຄວນຈະເປັນທາງລາຍລັກອັກສອນແລະ ລວມເອົາ: ການບັນຣະຍາຍຂອງການຍົກເວັ້ນທີ່ຖືກຮ້ອງຂໍເອົາ; ເຫດຜົນທີ່ທ່ານຂໍເອົາການຍົກເວັ້ນ; ແລະ ຣະຍະເວລາຂອງການຍົກເວັ້ນ. ຜູ້ຄວບຄຸມງານ DVR ຈະກວດເບິ່ງຄຳຮ້ອງຂໍຄືນ ແລະ ຈະຕອບທາງໜັງສືພ້ອມດ້ວຍການອະທິບາຍຂອງເຫດຜົນສຳລັບການອະນຸມັດ ຫລື ການປະຕິເສດ. ທ່ານຈະຮ້ອງຂໍເອົາຄວາມຊ່ວຍເຫລືອຈາກຜູ້ປຶກສາ DVR ຂອງທ່ານ ຫລື ພະນັກງານ VR ຄົນອື່ນເພື່ອຈະຂຽນປະກອບໜັງສືຄຳຮ້ອງຂໍເອົາການຍົກເວັ້ນຕໍ່ນະໂຍບາຍ.

### 4 ຮ້ອງຂໍເອົາການໄກ່ເກັ່ຽ

ການເຈຣະຈາໄກ່ເກັ່ຽແມ່ນທາງເລືອກອີກທາງນຶ່ງທີ່ທ່ານຈະຮ້ອງຂໍເອົາຖ້າຫາກວ່າທ່ານບໍ່ເຫັນພ້ອມນຳການຕັດສິນທີ່ DVR ເຮັດ. ການໄກ່ເກັ່ຽແມ່ນການດຳເນີນການຕາມສະມັກໃຈ ແລະ ທ່ານ ແລະ DVR ທັງສອງຕ້ອງເຫັນພ້ອມນຳການໄກ່ເກັ່ຽ.

DVR ຈ້າງເອົາຜູ້ໄກ່ເກັ່ຽຈາກຂ້າງນອກເພື່ອຈະພົບກັບທ່ານ ແລະ ຜູ້ຕາງໜ້າ DVR, ຕາມປົກກະຕິແລ້ວຜູ້ປຶກສາຂອງທ່ານ. ທ່ານ ແລະ DVR ທັງສອງຈະມີໂອກາດທີ່ຈະອະທິບາຍເຫດຜົນສຳລັບການຕັດສິນຂອງທ່ານ ແລະ ທີ່ຈະແລກປ່ຽນຣາຍຣະອຽດຕ່າງໆທີ່ອູ້ມຊູທ່າທີຂອງທ່ານ. ບົດບາດຂອງຜູ້ໄກ່ເກັ່ຽແມ່ນເພື່ອຈະຊ່ວຍເຫລືອທ່ານແລະ DVR ເວົ້າລົມກັນກ່ຽວກັບບັນຫາ ແລະ ບັນລຸການຕົກລົງເຫັນພ້ອມຮ່ວມກັນ.

ຖ້າຫາກວ່າການເຈຣະຈາໄກ່ເກັ່ຽບໍ່ເປັນຜົນເຖິງການຕົກລົງເຫັນພ້ອມ, ທ່ານຍັງຈະມີສິດທີ່ຈະຂໍເອົາການຟັງເຣື່ອງທີ່ເປັນທາງການ ຫລື ໃຊ້ທາງເລືອກແນວອື່ນ. ເພື່ອຣາຍຣະອຽດເພີ້ມເຕີມ ຫລື ເພື່ອຈະຂໍເອົາການເຈຣະຈາໄກ່ເກັ່ຽ, ເວົ້າລົມນຳຜູ້ປຶກສາ DVR ຂອງທ່ານ ຫລື ພະນັກງານ DVR ຄົນອື່ນ, ຫລື ໂທຫາ 1-800-637-5627(V/TTY) ເພື່ອຈະເວົ້ານຳຜູ້ຕາງໜ້າຂອງພະແນກປະຊາສັມພັນຂອງ DVR.

### 5 ຮ້ອງຂໍເອົາການຟັງເຣື່ອງທີ່ເປັນທາງການ

ທ່ານຈະກະໂດດຂ້າມການຟັງເຣື່ອງທີ່ບໍ່ເປັນທາງການຊຶ່ງຖືກກ່າວມາແລ້ວຢູ່ຂ້າງເທິງນີ້ ແລະ ຮ້ອງຂໍເອົາການຟັງເຣື່ອງທີ່ເປັນທາງການໄດ້ໃນທຸກໆເວລາທີ່ທ່ານບໍ່ເຫັນພ້ອມນຳການຕັດສິນທີ່ DVR ເຮັດລົງໄປ.

ໃນຣະຫວ່າງການຟັງເຣື່ອງທີ່ເປັນທາງການ,ທ່ານ ແລະ DVR ທັງສອງຈະສະເນີຣາຍຣະອຽດ, ພະຍານ, ແລະ ເອກສານ ເພື່ອຈະອູ້ມຊູທ່າທີຂອງທ່ານ. ທ່ານຈະຂໍເອົາທະນາຍຄວາມຄົນນຶ່ງ ຫລື ຄົນໃດຄົນນຶ່ງເພື່ອຈະເປັນຕົວແທນຂອງທ່ານໄດ້, ດ້ວຍຣາຍຈ່າຍສ່ວນຕົວຂອງທ່ານເອງ, ຖ້າຫາກວ່າທ່ານເລືອກເອົາ. ອັຍຍະການສານອຳນາດການປົກຄອງຈະທຳການຕັດສິນຫລັງຈາກການພິຈາຣະນາເບິ່ງຣາຍຣະອຽດ ແລະ ເອກສານຕ່າງໆ ທີ່ຖືກສະເນີມາ.

ຫ້ອງການຟັງເຣື່ອງຂອງອຳນາດການປົກຄອງສົ່ງຄຳຕັດສິນໂດຍທາງໜັງສືໄປຫາທ່ານພາຍໃນ 30 ວັນຂອງການຟັງເຣື່ອງທີ່ເປັນທາງການ. ຄຳຕັດສິນຂອງການຟັງເຣື່ອງແມ່ນສຸດຂາດ ແລະ DVR ວາງໃຊ້ຄຳຕັດສິນອັນນີ້.

## ສິດທິຂອງລູກຄ້າ

ຢູ່ທີ່ພະແນກ DVR ພວກເຮົາຢາກຈະເຫັນລູກຄ້າຂອງພວກເຮົາໝົດທຸກຄົນບັນລຸເປົ້າໝາຍວຽກງານຂອງເຂົາເຈົ້າ. ໃນຖານະເປັນລູກຄ້າຂອງພະແນກ DVR, ທ່ານທຳການຕັດສິນໃຈກ່ຽວກັບເປົ້າ ໝາຍວຽກງານ ແລະ ການບໍຣິການຂອງທ່ານໂດຍການປະສານຮ່ວມກັນນຳຜູ້ປຶກສາຂອງ DVR. ມັນສຳຄັນສຳລັບທ່ານທີ່ຈະຮູ້ຈັກສິດທິຂອງທ່ານຕະລອດວິທີດຳເນີນການຝຶກຝົນໃຫ້ດີຄືນເມື່ອທຳການຕັດສິນໃຈທີ່ສຳຄັນເຫລົ່ານີ້.

